ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກໍາ ແລະ ປ່າໄມ້
ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 2416 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 25.11.2024

# ແຈ້ງການ

ເຖິງ : - ຫ້ອງການກະຊວງ, ບັນດາກົມ, ສະຖາບັນ ແລະ ສູນ ອ້ອມຂ້າງກະຊວງກະສິກໍາ ແລະ ປ່າໄມ້;
- ບັນດາວິທະຍາໄລກະສິກໍາ, ປ່າໄມ້ ແລະ ຊົນລະປະທານ ທີ່ຂຶ້ນກັບກະຊວງກະສິກໍາ ແລະ ປ່າໄມ້;
- ບັນດາພະແນກກະສິກໍາ ແລະ ປ່າໄມ້ປະຈໍາແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ສະໝັກທຶນການສຶກສາລະດັບປະລິນຍາໂທ ສໍາລັບປີ **2025** ພາຍໃຕ້ທຶນຂອງອົງການຮ່ວມມືສາກົນເກົາຫຼີ (**KOICA Scholarship Program 2025**), ທີ່ ສ. ເກົາຫຼີ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ໜັງສືແຈ້ງທຶນ ຈາກອົງການຮ່ວມມືສາກົນ ສ. ເກົາຫຼີ (KOICA ) ເດືອນ ພະຈິກ 2024;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງ ພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

ກົມຈັດຕັ້ງ ແລະ ພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ກ່ຽວກັບທຶນການສຶກສາລະດັບປະລິນຍາໂທ ສໍາລັບ ປີ 2025 ພາຍໃຕ້ທຶນຂອງອົງການຮ່ວມມືສາກົນ ສ.ເກົາຫຼີ (KOICA Scholarship Program 2025), ທີ່ ສ.ເກົາຫຼີ, ເຊິ່ງມີຈໍານວນ 15 ຫົວຂໍ້ ທີ່ຜູ້ສົນໃຈສາມາດເລືອກສະໝັກໄດ້ປະກອບມີ: ຫົວຂໍ້ທີ່ກ່ຽວຂ້ອງກັບຂະແໜງກະສິກໍາ ແລະ ປ່າໄມ້ ແລະ ຫົວຂໍ້ທີ່ກ່ຽວຂ້ອງກັບວິຊາສະເພາະຂອງຕົນ, ດັ່ງມີລາຍລະອຽດລຸ່ມນີ້:

| ລ/ດ | ຫົວຂໍ້ | ມະຫາວິທະຍາໄລ |
|---|---|---|
| 1 | Master's Degree Program in Trade and Industrial Policy for Innovative Growth and Resilience | KDI School of Public Policy and Management |
| 2 | Master's Degree Program in Sustainable Regional Development | KDI School of Public Policy and Management |
| 3 | Master's Degree Program in Agricultural Economics | Kangwon National University |
| 4 | Master's Degree Program in Agricultural Engineering | Kyungpook National University |
| 5 | Master's Degree Program in Agricultural Production | Kyungpook National University |
| 6 | Master's Degree Program in Energy Policy | Seoul National University |
| 7 | Master's Degree Program in Urban Development | University of Seoul |
| 8 | Master's Degree Program in Global Health Security | Yonsei University |



ກົມຈັດຕັ້ງ ແລະ ພະນັກງານ, ຕູ້ປນ 811, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 412347, 415368, E-mail: doapmaf@gmail.com Website: https://dop.maf.gov.la/

| | | |
|---|---|---|
| 9 | Master's Degree Program in Water Resources Management | Yeungnam University |
| 10 | Master's Degree Program in Policy Competency Based on ICT Convergence | Handong Global University |
| 11 | Master's Degree Program in Tax and Fiscal Policy | Korea University |
| 12 | Master's Degree Program in Public Management and Administrative reform | Seoul National University |
| 13 | Master's Degree Program in Gender Equality | Ewha Womans University |
| 14 | Master's Degree Program in Global Education Leadership | Korea National University of Education |
| 15 | Master's Degree Program in Smart-City Management and Technology | Hanyang University |

<u>ເງື່ອນໄຂ ແລະ ວິທີການສະໝັກ:</u>

- ຜູ້ທີ່ຈະສະໝັກຕ້ອງເປັນພະນັກງານ-ລັດຖະກອນສົມບູນ 02 ປີຂຶ້ນໄປ, ອາຍຸ ບໍ່ເກີນ 40 ປີ;
- ຜູ້ສະໝັກຕ້ອງມີຄວາມຮູ້ພາສາອັງກິດໃນລະດັບດີ ທັງພາກເວົ້າ, ຂຽນ, ຟັງ ແລະ ອ່ານ;
- ຜູ້ສະໝັກຕ້ອງມີສຸຂະພາບແຂງແຮງ;
- ສຳລັບແບບຟອມສະໝັກ ແລະ ລາຍລະອຽດຕ່າງໆຂອງທຶນສາມາດດາວໂຫຼດໄດ້ທີ່ ເວັບໄຊ https://koica.go.kr/sites/ciat/index.do ຫຼື ຕາມ QR Code ດ້ານລຸ່ມ, ສ່ວນລາຍອະອຽດເພີ້ມເຕີມໃຫ້ພົວພັນພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ: (ທ.ສົມເພັດອຸດອນ ດວງມາລາ) ໂທ: 021 415368, 020 52879569.

ພາຍຫຼັງທີ່ຄັດເລືອກເອົາພະນັກງານຜູ້ທີ່ມີເງື່ອນໄຂເໝາະສົມເພື່ອເຂົ້າຮ່ວມສະໝັກທຶນດັ່ງກ່າວແລ້ວໃຫ້ສົ່ງລາຍຊື່ພ້ອມແບບຟອມສະໝັກຕາມເງື່ອນໄຂຂອງ ອົງການຮ່ວມມືສາກົນເກົາຫຼີ (KOICA) ເຖິງ ກົມຈັດຕັ້ງ ແລະ ພະນັກງານ ເພື່ອສັງລວມສົ່ງໃຫ້ ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ ກ່ອນວັນທີ **17** ມັງກອນ **2025**.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າກົມ

ສຳລັບແບບຟອມສະໝັກ

ບຸນທະວີ ໄຊຍະເພັດ



ກົມຈັດຕັ້ງ ແລະ ພະນັກງານ, ຕູ້ປນ 811, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 412347, 415368, E-mail: doapmaf@gmail.com Website: https://dop.maf.gov.la/

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ
ຫ້ອງການ

ເລກທີ 3435 /ກຜທ.ກຮມ-ອປອ.03
ນະຄອນຫຼວງວຽງຈັນ, ວັນທີ 26 ພະຈິກ 2024

**ຮຽນ:** ທ່ານຫົວໜ້າຫ້ອງການ
ກະຊວງກະສິກຳ ແລະ ປ່າໄມ້ **,ທີ່ນັບຖື.**

**ເລື່ອງ: ຄັດເລືອກພະນັກງານເຂົ້າຮ່ວມສະໝັກທຶນປະລິນຍາໂທ ທີ່ປະເທດ ສ.ເກົາຫຼີ ສຳລັບປີ 2025 (2025 KOICA Master's Degree Scholarship Program)**

- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ການຊ່ວຍເຫຼືອທາງການເພື່ອການພັດທະນາ ສະບັບເລກທີ: 357/ລບ, ລົງວັນທີ່ 09 ຕຸລາ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 0234/ກຜທ, ລົງວັນທີ 02 ກຸມພາ 2022;
- ອີງຕາມ ຈົດໝາຍຂອງອົງການຮ່ວມມືສາກົນເກົາຫຼີ (KOICA) ປະຈຳ ສປປ ລາວ ສະບັບເລກທີ KOICA/FP-24-029 ລົງວັນທີ 20 ພະຈິກ 2024;
- ອີງຕາມການຄົ້ນຄ້ວາ ແລະ ສະເໜີຂອງກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ ຄັ້ງວັນທີ 26 ພະຈິກ 2024.

ຫ້ອງການ, ກະຊວງແຜນການ ແລະການລົງທຶນ ຂໍຖືເປັນກຽດ ແຈ້ງມາຍັງທ່ານຊາບວ່າ: ລັດຖະບານ ສ.ເກົາຫຼີ ກໍ່ຄືອົງການຮ່ວມມືສາກົນເກົາຫຼີ (KOICA) ປະຈຳ ສປປ ລາວ ຈະໄດ້ຈັດສັນທຶນການສຶກສາລະດັບປະລິນຍາໂທ ທີ່ປະເທດ ສ.ເກົາຫຼີ ສຳລັບປີ 2025 ເພື່ອໃຫ້ພະນັກງານ-ລັດຖະກອນ ຂອງ ສປປ ລາວ ເຂົ້າຮ່ວມສະໝັກທຶນດັ່ງກ່າວ **(2025 KOICA Master's Degree Scholarship Program ).** ເຊິ່ງມີທັງໝົດ 15 ຫົວຂໍ້ ດັ່ງຕາຕະລາງຂ້າງລຸ່ມນີ້:

| ລ/ດ | ຫົວຂໍ້ | ມະຫາວິທະຍາໄລ |
|---|---|---|
| 1. | Master's Degree Program in Trade and Industrial Policy for Innovation Growth and Resilience | KDI School of Public Policy and Management |
| 2. | Master's Degree Program in Sustainable Regional Development | KDI School of Public Policy and Management |
| 3. | Master's Degree Program in Agricultural Economics | Kangwon National University |
| 4. | Master's Degree Program in Agricultural Engineering | Kyungpook National University |

| | | |
|---|---|---|
| 5. | Master's Degree Program in Agricultural Production | Kyungpook National University |
| 6. | Master's Degree Program in Energy Policy | Seoul National University |
| 7. | Master's Degree Program in Urban Development | Seoul University |
| 8. | Master's Degree Program in Global Health Security | Yonsei University |
| 9. | Master's Degree Program in Water Resources Management | Yeungnam University |
| 10. | Master's Degree Program in Policy Competency Based on ICT Convergence | Handong Global University |
| 11. | Master's Degree Program in Tax and Fiscal Policy | Korea University |
| 12. | Master's Degree Program in Public Management and Administrative Reform | Seoul National University |
| 13. | Master's Degree Program in Gender Equality | Ewah Womans University |
| 14. | Master's Degree Program in Global Education Leadership | Korea National University of Education |
| 15. | Master's Degree Program in Smart-City Management and Technology | Hanyang University |

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານເພື່ອພິຈາລະນາສົ່ງພະນັກງານທີ່ເໝາະສົມຂອງທ່ານ (ອາຍຸບໍ່ເກີນ 40 ປີ) ເພື່ອເຂົ້າຮ່ວມສະໝັກທຶນດັ່ງກ່າວ ແລ້ວປະກອບແບບຟອມຕາມເງື່ອນໄຂທີ່ອົງການ ຮ່ວມມືສາກົນເກົາຫຼີ (KOICA) ໄດ້ລະບຸໄວ້ໃນເອກະສານແນະນຳແລ້ວສົ່ງໃຫ້ ກົມຮ່ວມມືສາກົນ (DIC), ກະຊວງແຜນການ ແລະ ການລົງທຶນ **ກ່ອນວັນທີ 21 ມັງກອນ 2025 .** ເພື່ອທີ່ຈະດຳເນີນການຂັ້ນຕໍ່ໄປ. ຖ້າຫາກກາຍກຳນົດເວລາ ດັ່ງກ່າວທາງອົງການ ຮ່ວມມືສາກົນເກົາຫຼີ (KOICA) ຈະບໍ່ຮັບເອົາແບບຟອມຂອງທ່ານ.

**ຫົວໜ້າຫ້ອງການ.**

ອຸຕະແກ້ວ ແກ້ວດວງສົນ

ສຳລັບແບບຟອມອີເລັກໂຕນິກສາມາດດາວໂຫຼດໄດ້ທີ່
**https://koica.go.kr/sites/ciat/index.do**

ກະຊວງແຜນການ ແລະການລົງທຶນ, ກົມຮ່ວມມືສາກົນ
ພະແນກອາຊີ-ປາຊີຟິກ ແລະອາຟຼິກາ, ໂທ: 020 55384455